**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**
******************

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ວັນທີ 31/10/2017

**ມະຕິ**
**ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ**
**ຄັ້ງທີ 3 ປະຈໍາປີ 2017, ວັນທີ 31/10/2017**

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນ ຄັ້ງທີ 3 ປະຈໍາປີ 2017 (ຕໍ່ໄປນີ້ຮຽກວ່າກອງປະຊຸມ) ໄດ້ເປີດຂຶ້ນໃນເວລາ 13:30 ໂມງ ຂອງວັນທີ 31/10/2017 ທີ່ສໍານັກງານໃຫຍ່ ທຄຕລ ໂດຍການເປັນປະທານຂອງ ທ່ານ ດຣ. ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີສະມາຊິກສະພາບໍລິຫານ ແລະ ຜູ້ສັງເກດການເຂົ້າຮ່ວມຕາມລາຍຊື່ຊ້ອນທ້າຍ.

ກອງປະຊຸມ ໄດ້ປຶກສາຫາລືບັນຫາຕ່າງໆພ້ອມທັງໄດ້ມີມະຕິຕົກລົງດັ່ງນີ້:

1. ຮັບຮອງໂດຍຫຼັກການເອົາ ບໍລິສັດ ເອີນແອນຢັງລາວ ຈໍາກັດ ເປັນຜູ້ກວດສອບ ທຄຕລ ປະຈໍາປີ 2018 ເພື່ອນໍາສະເໜີກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈໍາປີ 2017 ຮັບຮອງຢ່າງເປັນທາງການ.
2. ຮັບຮອງເອົາຜົນສໍາເລັດການເພີ່ມທຶນຂອງ ທຄຕລ ຊຶ່ງເຮັດໃຫ້ທຶນຈົດທະບຽນຂອງ ທຄຕລ ໄດ້ເພີ່ມຈາກເດີມ 682.888.000.000 ກີບ ມາເປັນ 1.038.616.500.000 ກີບ (ໜຶ່ງພັນສາມສິບແປດຕື້ຫົກຮ້ອຍສິບຫົກລ້ານຫ້າແສນກີບ).
3. ຮັບຮອງໃນທາງຫຼັກການ ກ່ຽວກັບ ການຫຼຸດສັດສ່ວນການຖືຮຸ້ນຂອງ ທຄຕລ ຢູ່ ທະນາຄານລາວຝລັ່ງ ຈາກ 46% ເຫຼືອ 30%. ມອບໃຫ້ ທຄຕລ ນໍາສະເໜີກະຊວງການເງິນໃນນາມຜູ້ຖືຮຸ້ນລາຍໃຫຍ່ຂອງ ທຄຕລ ແລະ ດໍາເນີນຂັ້ນຕອນຕ່າງໆຕາມລະບຽບການ.
4. ຮັບຮອງບົດວິພາກເສດຖະກິດ ແລະ ຮັບຮອງການສ້າງຕັ້ງສາຂາໃໝ່ຂອງ ທຄຕລ.
5. ຮັບຮອງລະບຽບຄຸ້ມຄອງສາຂາຂອງ ທຄຕລ.

ກອງປະຊຸມ ໄດ້ປິດລົງໃນເວລາ 16:15 ໂມງ ຂອງວັນດຽວກັນ.

**ປະທານສະພາບໍລິຫານ ທຄຕລ**

**ປອ. ບຸນເຫຼືອ ສິນໄຊວໍຣະວົງ**